# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 25 ມີນາ 2007 (03-25-2007)

---

## ພຣະເຢຊູຊົງປົວແປງຊີວິດຂອງພວກເຮົາ

**ຂໍ້ພຣະຄັມພີໃນບົດຮຽນ:** ( ໂຢຮັນ 11:1,3,6-7,20-27,38-40,43-44 )

**ພຣະຄັມພີແຫ່ງຄວາມຈິງ:** ເຖິງແມ້ນວ່າຈະຢູ່ໃນເວລາທີ່ເຫດການທີ່ເກີດຂຶ້ນທີ່ຄິດວ່າຫມົດຫວັງແລ້ວແລະຢູ່ໃນສະຖານະການທີ່ປ່ຽນແປງໄປໃນທາງກົງກັນຂ້າມ, ພຣະເຢຊູມີຄວາມສາມາດທີ່ຈະຊ່ວຍມະນຸດໃຫ້ຜ່ານຜ່າກັບສະພາວະທີ່ຮ້າຍແຮງແລະເຮັດໃຫ້ກັບມີຄວາມຫວັງຂຶ້ນໃຫມ່ໄດ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນບົດນີ້ໄດ້ແຕ່ງແລະຈະຈັດຕຽມໄວ້ເພື່ອຊ່ວຍໃຫ້ທ່ານໄດ້ຄົ້ນພົບວ່າພຣະເຢຊູໃຫ້ຊົງເຮັດສິ່ງໃດແດ່ເພື່ອພວກເຮົາໂດຍການ...

- ຍອມຮັບສາລະພາບທີ່ພຣະເຢຊູຊົງເປັນຜູ້ທີ່ໄດ້ຟື້ນຄືນພຣະຊົນແລ້ວແລະເປັນຊີວິດ, ແລະ...
- ຕັດສິນໃຈທີ່ຈະເຊື່ອແລະແລະໄວ້ວາງໃຈພຣະເຢຊູໃນເຫດການທີ່ເກີດຂຶ້ນແລະທີ່ຄິດວ່າຫມົດຫວັງແລ້ວ.

## ສຶກສາພຣະຄັມພີ

## ແມ່ນໃຜຈະຊ່ວຍຂ້າພະເຈົ້າໃຫ້ຜ່ານຜ່າກັບເຫດການທີ່ໃນຂນະນີ້ທີ່ຫມົດຫວັງແລ້ວ?

ໄມໂກມີຄວາມຊົມຊື່ນທີ່ມີຣົດສມັຍໂບຮານໄວ້ຄອບຄອງ. ລາວໄດ້ພົບຣົດການາໂຣປີ 67 ຄັນນຶ່ງ, ເລກໄມລ໌ກໍສູງ, ເບາະນັ່ງກໍຂາດ, ແລະກໍບໍ່ມີຄຸນນະພາບທີ່ຈະແລ່ນຢູ່ເທິງທ້ອງຖນົນໄດ້. ເຖິງຢ່າງໃດກໍຕາມ, ເມື່ອໄດ້ຣົດຄັນນີ້ມາແລ້ວລາວກໍໄດ້ສ້ອມແປງທາສີໃຫມ່ຫມົດທັງຄັນ. ຫລັງຈາກທີ່ໄດ້ປ່ຽນພົມແລະເບາະນັ່ງແລ້ວ, ລາວໄດ້ຕື່ມຊິ້ນສ່ວນທຸກຢ່າງທີ່ຈະເຮັດໃຫ້ເປັນຣົດແຂ່ງເພື່ອທີ່ຈະຕຽມເອົາໄປແລ່ນແຂ່ງຂັນເອົາລາງວັນ.

ໄມໂກມີຄວາມຊໍານິຊໍານານໃນການສ້ອມແປງຣົດເກົ່າໃຫ້ເປັນຣົດໃຫມ່ທີ່ມີຄຸນນະພາບດີທີ່ສຸດທີ່ສາມາດໃຊ້ເປັນຣົດສໍາຫລັບແຂ່ງຂັນໄດ້, ແຕ່ພຣະເຢຊູຊົງມີຄວາມຊໍານິຊໍານານໃນການປົວແປງຊີວິດທີ່ແຕກຫັກແລ້ວ. ພຣະອົງສາມາດນໍາເອົາສິ່ງທີ່ແຕກຫັກ, ຂາດ, ແລະຫມົດຄຸນນະພາບ ແລະໄດ້ປົວແປງຊີວິດຂອງຄົນເຫລົ່ານັ້ນໃຫ້ເປັນຊີວິດທີ່ເປັນຂອງແທ້ດັ້ງເດີມທີ່ຢູ່ໃນຄວາມເອົາໃຈໃສ່ຂອງພຣະອົງ. ບົດຮຽນໃນວັນນີ້ຈະຊ່ວຍໃຫ້ພວກເຮົາມີຄວາມເຂົ້າໃຈຂຶ້ນຕື່ມໃນເຣື່ອງທີ່ພຣະເຢຊູໄດ້ຊົງປົວແປງຊີວິດຂອງຄົນຫລາຍຄົນ. ພຣະອົງເຮັດໃຫ້ຊີວິດຜູ້ທີ່ພຣະອົງຊົງຮັກແພງຄືລາຊະໂຣຟື້ນຄືນມາຈາກຄວາມຕາຍສູ່ຊີວິດ. ພຣະອົງໄດ້ປົວແປງຊີວິດເອື້ອຍນ້ອງຂອງລາຊະໂຣນໍາອີກ, ຄືນາງມາຣີອາແລະນາງມາທາ, ໃຫ້ມີຄວາມຫວັງແລະຄວາມເຊື່ອເກີດຂຶ້ນ. ໃນວັນນີ້ທ່ານເດຕ້ອງການທີ່ຈະປົວແປງຊີວິດຂອງທ່ານບໍ່? ບໍ່ມີບັນຫາ! ພຣະເຢຊູເປັນເຈົ້ານາຍຂອງການປົວແປງຊີວິດໃຫ້ດີຄືນໃຫມ່ໄດ້.

### 1. ໃນເຫດການຂອງຄວາມເສົ້າໂສກເສັຽໃຈ ( ໂຢຮັນ 11:1-3, 6-7)

ລາຊະໂຣແລະເອື້ອຍຂອງລາວຄືມາຣີອາແລະມາທາທີ່ອາສັຍຢູ່ໃນບ້ານເບັດທານີ, ທີ່ຢູ່ນອກເມືອງເຢລູຊາເລັມ. ພຣະເຢຊູຊົງໄດ້ຮັບຂ່າວວ່າລາຊະໂຣກໍາລັງປ່ວຍຢູ່. ເອື້ອຍຂອງລາວໄດ້ສົ່ງຂ່າວໃຫ້ພຣະເຢຊູຊົງໄດ້ຮູ້ວ່າພວກເຂົາກໍາລັງຢູ່ໃນເຫດການທີ່ທຸກໃຈໂດຍບອກວ່າ **ຜູ້ທີ່ພຣະອົງຊົງຮັກແພງກໍາລັງປ່ວຍຢູ່.** ພວກເຂົາອາດຮູ້ວ່າລາຊະໂຣກໍາລັງໃກ້ຈະຕາຍ, ແລະພວກເຂົາໄດ້ເຄີຍເຫັນພຣະເຢຊູຊົງກະທໍາການປິ່ນປົວດ້ວຍຣິດອໍານາດຂອງພຣະອົງໃນຫຼາຍບ່ອນແລະຫລາຍເທື່ອແລ້ວ. ເມື່ອພຣະອົງໄດ້ຍິນຂ່າວນີ້ແລ້ວ, ພຣະອົງຊົງປະຖິ້ມພາຣະກິດທຸກຢ່າງທີ່ພຣະອົງກໍາລັງ

ເຮັດຢູ່ແລ້ວໄປຫາພວກເຂົາບໍ່? ລາຊະໂຣເປັນຜູ້ທີ່ພຣະເຢຊູຊົງຮັກແຕ່ບໍ່ໄດ້ໝາຍຄວາມວ່າບັນຫາຕ່າງໆ , ຄວາມເຈັບໄຂ້ໄດ້ປ່ວຍຫລືຄວາມຕາຍຈະບໍ່ເກີດຂຶ້ນກັບລາວ.

ໃນການຕອບຮັບຂ່າວຄາວຄັ້ງນີ້, ພຣະເຢຊູຍັງຄົງພັກຢູ່ບ່ອນທີ່ພຣະອົງຢູ່ອີກສອງວັນ. ແທນທີ່ຈະປະຖິ້ມພາຣະກິດທຸກຢ່າງທີ່ພຣະອົງກຳລັງເຮັດຢູ່ເພື່ອຟ້າວທີ່ຈະໄປບ້ານເບັດທານີ, ພຣະອົງຍັງຄົງປະທັບຢູ່ທີ່ນັ້ນຕື່ມແລະຊົງບອກພວກສາວົກວ່າໂຣກນັ້ນຈະບໍ່ເຖິງຕາຍແຕ່ເກີດຂຶ້ນເພື່ອເຊີດຊູພຣະກຽດຂອງພຣະເຈົ້າ ( ຢຮ 11:4 ). ແລະຫລັງຈາກນັ້ນສອງວັນພຣະອົງກໍໄດ້ທ້ອນໂຮມເອົາພວກສາວົກ, ແລະເດີນທາງໄປໃນແຂວງຢູດາຍ.

ເປັນຫຍັງພຣະເຢຊູຈຶ່ງບໍ່ໃຫ້ກຽດໃນຄຳຂໍຮ້ອງຂອງພວກເອື້ອຍຂອງລາວ? ເປັນຫຍັງພຣະອົງຈຶ່ງບໍ່ສະເດັດໄປປິ່ນປົວຜູ້ທີ່ພຣະອົງຊົງຮັກໃນທັນໃດນັ້ນທີ່ໄດ້ຮັບຂ່າວ? ພຣະອົງບໍ່ໄດ້ທຳຢ່າງນັ້ນກໍເພາະຄວາມເຈັບປວດແລະການຕາຍຂອງຣາຊາໂຣຈະເປັນຜົນທີ່ຖວາຍກຽດຍິ່ງໃຫຍ່ແກ່ພຣະເຈົ້າ, ພຣະເຢຊູຊົງຮູ້ວ່າສິ່ງທີ່ເກີດຂຶ້ນແມ່ນມີເຫດຜົນ. ພຣະອົງເຄີຍໄດ້ເຮັດໃຫ້ລູກສາວຂອງໄຊຣັສ ( ມລກ 5: 22-43 ) ແລະລູກຊາຍຄົນດຽວຂອງຍິງໝ້າຍທີ່ບ້ານນາອີນກັບຄືນມີຊີວິດມາແລ້ວ ( ລູກາ 7: 11-17 ), ສະນັ້ນຄວາມຕາຍຈຶ່ງບໍ່ມີບັນຫາກີດກັ້ນພຣະອົງໄດ້ໃນເຫດການທີ່ເກີດຂຶ້ນກັບລາຊາໂຣກໍຄືກັນກັບຄົນທັງຫລາຍເຊັ່ນດຽວກັນ.

ຄົນທີ່ຫັນມາຫາພຣະເຢຊູໃນເວລາທີ່ເກີດມີບັນຫາບໍ່ຄວນຈະຄິດວ່າການອະທິຖານຂອງເຂົາບໍ່ເປັນຜົນສຳເຣັດເພາະພຣະອົງບໍ່ໄດ້ຊ່ວຍພວກເຂົາໃຫ້ພົ້ນຈາກສະພາບການເຫລົ່ານັ້ນ. ມີບາງເທື່ອພຣະອົງກໍໄດ້ຊົງຊ່ວຍແກ້ໄຂໃນເວລາທີ່ເຫດການຢູ່ແລະບາງຄັ້ງພຣະອົງຈະຊົງປະທານໃຫ້ມີສະຕິປັນຍາໃນການຕໍ່ສູ້ຜ່ານຜ່າບັນຫາໄປໄດ້. ເຖິງຈະເປັນຢ່າງໃດພວກເຮົາກໍຕ້ອງຮັກສາຄວາມເຊື່ອໄວ້ທີ່ວ່າພຣະອົງຈະສາມາດຊ່ວຍພວກເຮົາໃນທາງແລະເວລາຂອງພຣະອົງເອງ.

## 2. <u>ຄວນຈະ...ສາມາດຈະ... ອາດຈະ...</u> (ໂຢຮັນ 11:20-27)

ເມື່ອພົບກັບການສູນເສັຽ, ທ່ານອາດຈະເລີ່ມຄິດວ່າທ່ານ ສົມຄວນຈະ...ສາມາດຈະ...ຫລືອາດຈະເຮັດສິ່ງໃດໄດ້ແຕ່ຕາມທັມມະຊາດມະນຸດ. ມາທາຜູ້ເປັນເອື້ອຍໄດ້ມີການສະແດງອອກມາຕາມທີ່ໃຈຄິດ, ໃນເມື່ອໄດ້ຍິນວ່າພຣະເຢຊູໄດ້ສະເດັດມາແລ້ວ, ແລະນາງກໍໄດ້ໄປພົບພຣະອົງ. ລາວໄດ້ລະບາຍຄວາມນ້ອຍໃຈທີ່ພຣະເຢຊູບໍ່ໄດ້ຕອບຮັບຂ່າວທີ່ສົ່ງໄປແລະບໍ່ໄດ້ມາປິ່ນປົວນ້ອງຊາຍຄືລາຊະໂຣ. ນາງເລີ່ມຄິດວ່າພຣະອົງຄວນຈະຢູ່ທີ່ນີ້, ຖ້າພຣະອົງຫາກປິ່ນປົວລາວກໍຈະບໍ່ຕາຍ. ສ່ວນມາຣີອາຍັງຄົງຢູ່ໃນເຮືອນເພາະບາງທີນາງອາດຈະເຄີຍພົບກັບເຫດການໃນທຳນອງດຽວກັນນີ້ມາແລ້ວ. ໂດຍການສະແດງອອກຂອງເອື້ອຍນ້ອງທັງສອງຄົນທີ່ແຕກຕ່າງກັນແຕ່ກໍແມ່ນທັມມະຊາດທີ່ຕອບສນອງຕໍ່ການຕາຍຂອງນ້ອງຊາຍຂອງເຂົາ.

ມາທາໄດ້ສະແດງຄວາມເຊື່ອໃນພຣະເຢຊູໃນສິດທີ່ພຣະອົງຈະທູນຂໍສິ່ງໃດຈາກພຣະເຈົ້າພຣະອົງກໍຈະຊົງປະທານໃຫ້ຕາມນ້ຳພຣະທັຍ. ເຖິງແມ່ນວ່າເວລານີ້ລາຊະໂຣໄດ້ຕາຍໄປແລ້ວ, ແຕ່ນາງກໍມີຄວາມຊົມຊື່ນຍິນດີໃນພຣະເຢຊູວ່າພຣະອົງຈະສາມາດເຮັດໃຫ້ນ້ອງກັບຄືນມີຊີວິດໄດ້ຄືໃນວັນສຸດທ້າຍເມື່ອຄົນທັງປວງເປັນຂຶ້ນມາ. ພຣະອົງຊົງບອກນາງໃຫ້ເຊື່ອໃນພຣະອົງ, ແລະນາງກໍໄດ້ເຮັດຕາມ.

ມາທາໄດ້ສະແດງຄວາມເຊື່ອໃນພຣະເຢຊູວ່າພຣະອົງຊົງເປັນພຣະເມສີອາແລະເປັນພຣະບຸດຂອງພຣະເຈົ້າຜູ້ທີ່ໄດ້ຊົງໃຫ້ຄຳສັນຍາຕັ້ງແຕ່ສມັຍປະຖົມມະການ. ນາງເຊື່ອວ່າພຣະອົງຊົງມາຈາກພຣະເຈົ້າພຣະອົງຈະຊົງເຮັດທຸກສິ່ງຕາມນ້ຳພຣະທັຍວ່າສິ່ງໃດດີທີ່ສຸດສຳລັບພວກເຮົາ. ເຖິງແມ່ນວ່າຄວາມເຊື່ອຂອງນາງຈະບໍ່ດີເລີດ. ຕໍ່ມາ, ພຣະເຢຊູໄດ້ບອກໃຫ້ຄົນທີ່ຕິດຕາມໃຫ້ກິ້ງກ້ອນຫີນອອກ, ນາງກໍໄດ້ເຕືອນເຣື່ອງທີ່ລາຊະໂຣໄດ້ຕາຍໄປແລ້ວສີ່ວັນ. ( ຂໍ້ 39 ). ຂອບພຣະຄຸນພຣະເຈົ້າສຳຫລັບຄວາມເຊື່ອທີ່ເຖິງວ່າຈະບໍ່ດີເລີດທີ່ຈະເຮັດສິ່ງໃຫຍ່ໄດ້ແຕ່ຄວາມກໍພຽງພໍກັບການທີ່ຈະນຳຄວາມຫວັງມາສູ່ຫົວໃຈທີ່ບອບຊ້ຳໄດ້.

ບາງຄັ້ງພຣະເຈົ້າອາດຈະເຮັດໃຫ້ປາກົດການຊ່ວຍເຫລືອຊ້າ. ໃນເວລາທີ່ພວກເຮົາສາມາດອະທິບາຍວ່າມີສິ່ງໃດເກີດຂຶ້ນແດ່ໃນຊີວິດຂອງພວກເຮົາ, ຊີວິດທີ່ຕິດຢູ່ກັບສັດຕູຂອງຄວາມເຊື່ອ. ພວກເຮົາຫລຽວເຫັນຢູ່ສເມີວ່າສິ່ງໃດທີ່ພວກເຮົາຄວນຈະເຮັດແລະສາມາດເຮັດໄດ້. ເຖິງຢ່າງໃດ, ພຣະເຢຊູກໍຊົງຕ້ອງການໃຫ້ພວກເຮົາມີຄວາມເຊື່ອ

ໝັ້ນໃນພຣະອົງເຖິງວ່າເຮົາຈະບໍ່ເຫັນວ່າສິ່ງນັ້ນຈະເປັນຢ່າງໃດໃນສຸດທ້າຍກໍຕາມ. ໃນເວລາຂອງຄວາມທຸກຍາກລໍາບາກ, ຄວາມໂສກເສົ້າ, ຄົນທີ່ມີຄວາມເຊື່ອແລ້ວແມ່ນຕັ້ງໝັ້ນຄົງຢູ່ແລະໃຫ້ຄໍາໝັ້ນສັນຍາຕໍ່ຄວາມເຊື່ອທີ່ພວກເຂົາມີ-ເຖິງວ່າມັນຈະບໍ່ເປັນໄປຕາມທີ່ເຂົາຕ້ອງການກໍຕາມ. ມາທາຕ້ອງການທີ່ຈະເຫັນການມະຫັສຈັນ, ແລະພຣະເຢຊູໄດ້ບອກໃຫ້ນາງເຊື່ອໃນພຣະອົງ. ເຖິງພວກເຮົາຈະຄິດສົງສັຍກ່ຽວກັບເຣື່ອງເວລາຂອງພຣະເຈົ້າ, ພຣະເຢຊູກໍຍັງຊົງຕ້ອງການໃຫ້ພວກເຮົາເຊື່ອແລະໄວ້ວາງໃຈໃນພຣະອົງ.

### 3. <u>ຊີວິດແລະຄວາມຫວັງໄດ້ຮັບກັບຄືນມາແລ້ວ</u> (ໂຢຮັນ 11:38-40,43-44)

ໃນຂນະທີ່ພຣະເຢຊູຊົງເດີນທາງໄປທີ່ອຸໂມງຝັງສົບຂອງລາຊາໂຣ, ພວກຄົນຍິວໄດ້ເວົ້າເຍາະເຍີ້ຍພຣະອົງວ່າພຣະອົງຊົງຮັກເຂົາຫລາຍພຽງໃດ ( ຂໍ້ 37 ). ພຣະເຢຊູເລີ້ມເກີດຄວາມຮ້າຍ. ພຣະອົງສາມາດທີ່ຈະປິ່ນປົວລາຊະໂຣໄດ້, ແຕ່ຈຸດປະສົງທີ່ໃຫຍ່ກວ່ານັ້ນຄືພຣະອົງມີແຜນການທີ່ຈະເຮັດໃຫ້ລາຊາໂຣຟື້ນຄືນມີຊີວິດໃໝ່. ບາງທີພຣະອົງໄດ້ຊົງເຮັດພາຣະກິດຂອງພຣະອົງທີ່ເຮົາຄິດບໍ່ເຖິງ, ແຕ່ບໍ່ໄດ້ໝາຍຄວາມວ່າພຣະອົງບໍ່ໄດ້ຮັກຜູ້ທີ່ເຈັບປວດຫລືຜູ້ທີ່ຕາຍ. ພຣະເຢຊູບອກຄົນທີ່ຕິດຕາມໄປນັ້ນໃຫ້ເອົາຫີນອອກ, ແຕ່ມາທາເກີດຄວາມກັງວົນເພາະລາວໄດ້ຕາຍໄປແລ້ວສີ່ວັນ. ນາງຮູ້ວ່າສົບໄດ້ເລີ້ມສົ່ງກິ່ນເໝັນແລ້ວ, ແລະນາງມີຄວາມຢ້ານກົວຕໍ່ສິ່ງທີ່ຈະໄດ້ພົບເຫັນ. ເຖິງແມ່ນວ່ານາງຈະເຄີຍໄດ້ເຫັນສິ່ງມະຫັສຈັນກ່ອນໜ້ານີ້ມາແລ້ວ, ພຣະເຢຊູຊົງເຕືອນນາງເຖິງສິ່ງທີ່ກໍາລັງຈະເກີດຂຶ້ນໃຫ້ເຫັນຄວາມຍິ່ງໃຫຍ່ຂອງພຣະເຈົ້າ. ບໍ່ແມ່ນວ່າການຕາຍຂອງທຸກໆ ຊີວິດຈະເກີດການມະຫັສຈັນຂຶ້ນທຸກຄັ້ງ, ແຕ່ການຕາຍຂອງຜູ້ທີ່ເຊື່ອທຸກຄົນກໍຈະມີສິ່ງທີ່ຖວາຍກຽດແກ່ພຣະເຈົ້າແລະຜູ້ທີ່ມີຄວາມເຊື່ອດ້ວຍໃນວາຣະສຸດທ້າຍ.

ໃນທີ່ສຸດ, ພຣະເຢຊູກໍໄດ້ຊົງສະແດງເຫດຜົນໃນການມາລ່າຊ້າໃນຄັ້ງນີ້, ລາຊະໂຣໄດ້ຕາຍແລ້ວ, ແລະການຟື້ນຄືນມີຊີວິດຂອງລາວເປັນສິ່ງມະຫັສຈັນ ( ຂໍ້ 42 ). ພຣະອົງຊົງກ່າວດັ່ງຢ່າງນີ້ກໍເພື່ອເຫັນແກ່ປະຊາຊົນທີ່ຢືນຢູ່ທີ່ນັ້ນທີ່ເຂົາຈະໄດ້ເຊື່ອວ່າພຣະເຈົ້າໄດ້ຊົງໃຊ້ພຣະອົງມາແທ້. ບາງຄັ້ງ, ພຣະເຈົ້າກໍໃຊ້ຄວາມເຈັບປວດ, ຄວາມທຸກທໍຣະມານ, ແລະຄວາມຕາຍຂອງຜູ້ທີ່ຕິດຕາມພຣະອົງເປັນຄໍາພະຍານແກ່ຄົນທັງຫລາຍທີ່ບໍ່ໄດ້ເຊື່ອ.

ພວກເຮົາກໍຢາກຈະຮູ້ຫລາຍຂຶ້ນກ່ຽວກັບເຣື່ອງການປະສົບການຂອງລາຊາໂຣ. ມີຜູ້ທີ່ເຊື່ອຫລາຍຄົນທີ່ຢາກຈະຮູ້ເຣື່ອງລາວຈາກລາຊະໂຣ, ແຕ່ພຣະຄັມພີບໍ່ໄດ້ບັນທຶກລາຍລະອຽດໄວ້ ( ເພາະພວກເຮົາບໍ່ຕ້ອງການມັນ ).

ທ່ານສາມາດທີ່ຈະວາດພາບເຖິງຄວາມປະຫລາດໃຈຂອງແຕ່ລະຄົນ-ນອກຈາກພຣະເຢຊູ- ເມື່ອເຫັນລາຊະໂຣໄດ້ຍ່າງອອກມາຈາກອູໂມງຝັງສົບນັ້ນໄດ້ບໍ່? ຄືລາຊະໂຣໃນຂນະທີ່ລຸກຂຶ້ນຍ່າງອອກມາໂດຍມີຜ້າພັນສົບຢູ່? ພຣະເຢຊູໄດ້ຊົງບອກໃຫ້ແກ້ຜ້າທີ່ພັນອອກເສັຍແລ້ວປ່ອຍເຂົາໄປ. ບັດນີ້ພຣະເຢຊູກໍໄດ້ຊົງຊຸບຊີວິດລາຊະໂຣຂຶ້ນມາໃໝ່ແລ້ວເພື່ອລາວຈະໄດ້ມີຊີວິດຢູ່ເພື່ອຖວາຍກຽດແດ່ພຣະເຈົ້າແລະເປັນພະຍານເຖິງຣິດອໍານາດຂອງພຣະເຢຊູດ້ວຍ.

ຣິດອໍານາດຂອງພຣະເຢຊູທີ່ໄດ້ເຮັດໃຫ້ຊີວິດທີ່ແຕກຫັກໄປແລ້ວຟື້ນຄືນມາໃໝ່ໃນທິດທາງແລະເວລາຂອງພຣະອົງເອງ. ພຣະອົງອາດຈະບໍ່ເລືອກທີ່ຈະປິ່ນປົວທຸກໆ ຄົນທາງດ້ານຮ່າງກາຍ, ແລະແນ່ນອນອາດຈະບໍ່ເຮັດໃຫ້ທຸກຄົນຟື້ນຄືນຈາກຄວາມຕາຍສູ່ຊີວິດ, ແລະພວກເຮົາຈະໄດ້ຮັບມໍຣະດົກທີ່ເປັນເຮືອນຢູ່ໃໝ່ທີ່ຢູ່ຫ່າງໄກທີ່ດີກວ່າໃນຊີວິດປັດຈຸບັນທີ່ໃຫ້ເຮົາໄດ້

## ບົດຮຽນຊີວິດ

ໂດຍການມີປະສົບການຜ່ານມາຂອງຄົນທີ່ເປັນຄຣິສຕຽນແລ້ວແລະຍັງບໍ່ທັນໄດ້ເປັນເທື່ອຄືຄວາມແຕກຫັກ, ຄວາມເຈັບປວດ, ແລະແມ່ນແຕ່ຄວາມຕາຍ, ພຣະເຢຊູສາມາດທີ່ຈະເຮັດໃຫ້ກັບຄືນມາໄດ້ເພື່ອເປັນທີ່ຖວາຍກຽດແດ່ພຣະເຈົ້າໂດຍການສູ້ທົນຜ່ານຜ່າບັນຫາທີ່ເກີດຂຶ້ນກັບພວກເຮົາຄື:

* ໂດຍເຮັດໃຫ້ເຂົ້າໃຈແຈ້ງເຖິງຄວາມຫ່ວງໃຍທີ່ພຣະອົງມີຕໍ່ພວກເຮົາໃນເວລາຂອງຄວາມທຸກໂສກເສົ້າ.
* ໂດຍແກ້ໄຂຄວາມລັງເລໃຈແລະເຮັດໃຫ້ພວກເຮົາມີຄວາມຫວັງຂຶ້ນມາໃຫມ່ແລະມີຄວາມເຊື່ອເກີດຂຶ້ນ.
* ພວກເຮົາຈະໄດ້ຮັບຄວາມຄົບບໍຣິບູນໃນຄວາມສຳພັນທີ່ມີກັບພຣະເຢຊູຜູ້ຊົງມີຣິດອຳນາດຢູ່ເຫນືອທຸກສິ່ງ ແລະພຣະອົງຈະຊົງເປັນຜູ້ທີ່ມະນຸດສາມາດຫັນກັບໄປເພື່ອຄວາມຊ່ວຍເຫລືອໃນເວລາທີ່ເຮົາຕ້ອງການໄດ້.
* ເພື່ອຊ່ວຍໃຫ້ມະນຸດໄດ້ເຂົ້າໃຈບາງຄັ້ງອາດຈະຍັງບໍ່ທັນເຖິງເວລາຂອງພຣະເຈົ້າ,ເວລາຂອງພຣະອົງນັ້ນ ປະເສີດທີ່ສຸດແລ້ວ.
* ມີຄວາມຫວັງ, ແລະຮູ້ວ່າຜູ້ທີ່ຍັງຄົງມີຄວາມເຊື່ອໃນອົງພຣະເຢຊູຄຣິດ, ຈະຕັ້ງຫມັ້ນຄົງຢູ່ບໍ່ຫວັ່ນໄຫວກັບ ເຫດການທີ່ເກີດຂຶ້ນ, ສາມາດທີ່ຈະເຫັນພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະເຈົ້າສະເດັດມາເພື່ອຊ່ວຍໃຫ້ ພົ້ນໃນທຸກເຫດການ.

( ອຸປຖັມໂດຍ ລາວຊາວເທິນແບັບຕິສສັມພັນ www.lsbf.org - ap ແປແລະຮຽບຮຽງ )